CỘNG HOÀ DÂN CHỦ NHÂN DÂN LÀO

Hoà bình – Độc lập – Dân chủ – Thống nhất – Thịnh vượng

**Văn phòng Thủ tướng** **Số 130/VPTTg**

**Thủ đô Vientiane, ngày 03/02/2022**

# THÔNG BÁO

**Kính gửi:** - Bộ trưởng, lãnh đạo các cơ quan tương đương;

- Đô trưởng Vientiane và các tỉnh trưởng trên cả nước;

**Về việc:** Hướng chỉ đạo tại cuộc họp Chính phủ về biện pháp phòng chống dịch Covid-19 trong giai đoạn mới.

- *Căn cứ Nghị định về Tổ chức và Hoạt động của Văn phòng Thủ tướng Lào số 574/TTg, ngày 28/09/2021;*
- *Căn cứ Hướng chỉ đạo và Quyết định tại cuộc họp thường kỳ Chính phủ Lào tháng 1/2022;*
- *Căn cứ Đề xuất của Uỷ ban chuyên trách về phòng chống, kiểm soát và giải quyết dịch Covid-19 tại cuộc họp thường kỳ Chính phủ Lào tháng 1/2022;*

Văn phòng Thủ tướng trân trọng thông báo quyết định và chỉ đạo của cuộc họp thường kỳ Chính phủ Lào tháng 1/2022 về biện pháp phòng chống dịch Covid-19 trong giai đoạn mới như sau:

1. Đồng ý nới lỏng thời gian cách ly đối với đối tượng nhập cảnh Lào là:

1.1 Đoàn đại biểu hoặc nhóm chuyên gia các cấp độ hoạt động, làm việc, bao gồm cả đi hội thảo tại nước ngoài và công dân Lào trở về từ nước ngoài, khi đến CHDCND Lào cần lấy mẫu xét nghiệm Covid-19 bằng phương pháp RT-PCR, nghỉ tại trung tâm cách ly do Uỷ ban chuyên trách quy định để chờ kết quả xét nghiệm trong không quá 48h, nếu kết quả xét nghiệm âm tính cần tiếp tục cách ly tại nơi cư trú đủ 07 ngày, đồng thời tuân thủ nghiêm ngặt biện pháp phòng chống và kiểm soát lây nhiễm dịch bệnh;

1.2 Cán bộ ngoại giao hoặc nhân viên đại sứ quán, nhân viên đại diện tổ chức quốc tế trong mạng lưới LHQ, tổ chức quốc tế được hưởng đặc quyền ngoại giao cùng thành viên gia

đình được Uỷ ban chuyên trách cho phép nhập cảnh Lào, khi đến CHDCND Lào phải lấy mẫu xét nghiệm Covid-19 bằng thiết bị RT-PCR và tiếp tục tự cách ly tại nơi cư trú đủ 07 ngày, đồng thời tuân thủ nghiêm ngặt biện pháp phòng chống và kiểm soát lây nhiễm dịch bệnh;

1.3 Nhóm doanh nhân hoặc nhà đầu tư được cho phép hoạt động kinh doanh hoặc đầu tư tại Lào, khi đến Lào phải lấy mẫu xét nghiệm Covid-19 bằng thiết bị RT-PCR nghỉ tại trung tâm cách ly do Uỷ ban chuyên trách quy định để chờ kết quả xét nghiệm trong không quá 48h, nếu kết quả xét nghiệm âm tính thì được phép hoạt động theo kế hoạch nhưng phải đeo thiết bị theo dõi y tế và tuân thủ nghiêm ngặt biện pháp phòng chống và kiểm soát lây nhiễm dịch bệnh;

1.4 Người nước ngoài là chuyên gia, chuyên viên, lao động, người kinh doanh, sinh viên, người gốc Lào và gia đình công dân Lào khi đến CHDCND Lào cần lấy mẫu xét nghiệm Covid-19 bằng phương pháp RT-PCR, nghỉ tại khách sạn do Uỷ ban chuyên trách quy định để chờ kết quả xét nghiệm trong không quá 48h, nếu kết quả xét nghiệm âm tính cần tiếp tục cách ly tại nơi cư trú đủ 07 ngày, đeo thiết bị theo dõi y tế, đồng thời tuân thủ nghiêm ngặt biện pháp phòng chống và kiểm soát lây nhiễm dịch bệnh;

1.5 Nhóm khách du lịch đến Lào theo chương trình luồng xanh du lịch, khi đến Lào cần lấy mẫu xét nghiệm Covid-19 bằng phương pháp RT-PCR, nghỉ tại khách sạn do Uỷ ban chuyên trách quy định để chờ kết quả xét nghiệm trong không quá 48h, nếu kết quả xét nghiệm âm tính thì được phép hoạt động theo kế hoạch nhưng phải đeo thiết bị theo dõi y tế và tuân thủ nghiêm ngặt biện pháp phòng chống và kiểm soát lây nhiễm dịch bệnh;

Các nhóm đối tượng được đề cập trong điểm 1.1-1.5 trên đây nếu có kết quả xét nghiệm dương tính có thể đến điều trị tại bệnh viện hoặc trung tâm điều trị hoặc điều trị tại nhà tối thiểu 10 ngày, căn cứ theo triệu chứng từng trường hợp và trong từng giai đoạn.

2. Người nước ngoài sinh sống tại Lào và người nhập cảnh Lào theo sự chấp thuận của Uỷ ban chuyên trách Trung ương cần cài đặt và đăng ký ứng dụng LaoKYC trên thiết bị di động để dùng dịch vụ Lao Susu và đăng ký tạo mã vaccine (thẻ xác nhận tiêm chủng) để xác nhận mức độ rủi ro cá nhân khi hoạt động, hành trình, đến cơ quan nhà nước, nhà máy, cửa hàng, nhà hàng và các địa điểm khác.

3. Cho phép Bộ Ngoại giao cấp thị thực cho khách du lịch theo nhóm đến Lào theo chương trình Vùng xanh du lịch được đề cập tại điểm 1.5, trong đó đảm bảo du khách phải đăng ký mã tiêm chủng để sử dụng trong thời gian du lịch tại Lào và cấp thị thực cho các nhóm đối tượng được đề cập tại điểm 1.1-1.4 trên đây theo sự cho phép của Uỷ ban chuyên trách.
4. Đồng ý về nguyên tắc cho mở cửa khẩu địa phương và cửa khẩu truyền thống đối với việc vận tải hàng hoá; giao thủ đô Vientiane và các tỉnh có đường biên giới với nước ngoài tiến hành kiểm tra, thảo luận với địa phương tiếp giáp (chung đường biên) của nước bạn, nếu thấy sẵn sàng toàn diện, đầy đủ các điều kiện thuận lợi cho việc vận tải hàng hoá và đảm bảo phòng chống, kiểm soát dịch Covid-19 thì có thể thoả thuận và cấp phép mở (cửa khẩu) trở lại.
5. Đồng ý cho khu vực tư nhân (đóng góp) vào hoạt động lấy mẫu, xét nghiệm Covid-19. Cụ thể, giao Bộ Y tế là trung tâm phối hợp với các bộ nghiên cứu, quy định tiêu chuẩn, điều kiện, đồng thời lập quy định quản lý đơn vị kinh doanh được cấp phép hoạt động xét nghiệm theo tiêu chuẩn mà Bộ Y tế ban hành.
6. Giao Uỷ ban chuyên trách phòng chống Covid-19 Trung ương thúc đẩy hoạt động sản xuất thuốc điều trị Covid-19 đủ với nhu cầu xã hội.
7. Giao Chính quyền địa phương các cấp tăng cường vận động tiêm chủng bằng các hình thức và phương pháp để đạt tỷ lệ tiêm chủng nhiều nhất có thể theo Chỉ thị của Thủ tướng về việc tăng cường tiêm vaccine ngừa Covid-19 số 24/TTg, ngày 10/11/2021.
8. Đồng ý cho mở mọi trung tâm thể thao trong nhà, ngoài trời, tuy nhiên chủ cơ sở phải tuân thủ nghiêm ngặt các biện pháp phòng ngừa dịch bệnh.
9. Tiếp tục đóng cửa tụ điểm giải trí và karaoke.
10. Giao Chính quyền địa phương các cấp cho phép và tạo điều kiện thuận cho dịch vụ vận tải hành khách, hành khách, người đi lại bằng phương tiện di chuyển liên tỉnh, liên huyện thường xuyên, trong đó tài xế và hành khách phải tiêm đủ vaccine, đồng thời cấm chính quyền mọi cấp gây khó khăn cho hoạt động đi lại và kiếm sống của người dân bằng cách ban hành quy định khác với quy định mà Chính phủ và Uỷ ban chuyên trách Trung ương đã ban hành.

11. Giao Uỷ ban chuyên trách phòng chống dịch Covid-19 các cấp khẩn trương triển khai Thông báo này bằng cách nhanh chóng ra hướng dẫn triển khai cụ thể.

Lưu ý: Thông báo này thay thế Thông báo 1494/VPTTg, ngày 14/11/2021.

Vì vậy, thông báo để ông/bà nắm được và thực hiện.

**KT. THỦ TƯỚNG**

**CHỦ NHIỆM VĂN PHÒNG THỦ TƯỚNG**

Đã ký và đóng dấu

Khamlavanh **CHANTHALAVANH**

TẠP CHÍ LÀO - VIỆT
Hội người Việt Nam thủ đô Viêng Chăn

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ — ເລກທີ 130/ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 03 ກຸມພາ 2022

# ແຈ້ງການ

ຮຽນ: - ບັນດາທ່ານ ລັດຖະມົນຕີກະຊວງ ແລະ ອົງການທຽບເທົ່າກະຊວງ ທີ່ນັບຖື;
- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງທົ່ວປະເທດ ທີ່ນັບຖື;

ເລື່ອງ: ທິດຊີ້ນໍາຂອງກອງປະຊຸມລັດຖະບານ ກ່ຽວກັບມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນ ການແຜ່ລະບາດ ຂອງພະຍາດ COVID-19 ໃນໄລຍະໃໝ່.

- ອີງຕາມ ດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 574/ນຍ, ລົງວັນທີ 28 ກັນຍາ 2021;
- ອີງຕາມ ທິດຊີ້ນໍາ ແລະ ຕົກລົງ ຂອງກອງປະຊຸມລັດຖະບານ ສະໄໝສາມັນ ປະຈໍາເດືອນມັງກອນ 2022;
- ອີງຕາມ ການສະເໜີຂອງຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19 ຕໍ່ກອງປະຊຸມລັດຖະບານ ສະໄໝສາມັນ ປະຈໍາເດືອນມັງກອນ 2022.

ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຕົກລົງ ແລະ ຊີ້ນໍາ ຂອງກອງປະຊຸມລັດຖະບານ ສະໄໝສາມັນ ປະຈໍາເດືອນ ມັງກອນ 2022 ກ່ຽວກັບມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນ ການແຜ່ລະບາດ ຂອງພະຍາດ COVID-19 ໃນໄລຍະໃໝ່ ມາຍັງບັນດາທ່ານຊາບ ແລະ ປະຕິບັດ ດັ່ງນີ້:

**1.** ເຫັນດີໃຫ້ມີການຜ່ອນຜັນ ໄລຍະເວລາການຈໍາກັດບໍລິເວນ ຕໍ່ແຕ່ລະເປົ້າໝາຍຜູ້ທີ່ຈະເດີນທາງເຂົ້າມາ ສປປ ລາວ ຄື:

**1.1** ຄະນະຜູ້ແທນ ຫຼື ທີມງານວິຊາການທຸກລະດັບ ທີ່ໄປເຄື່ອນໄຫວເຮັດວຽກ ລວມທັງໄປສໍາມະນາຢູ່ຕ່າງປະເທດ ແລະ ພົນລະເມືອງລາວ ທີ່ ກັບມາຈາກຕ່າງປະເທດ, ເມື່ອມາເຖິງ ສປປ ລາວ ຕ້ອງໄດ້ເກັບຕົວຢ່າງ ເພື່ອກວດຫາເຊື້ອພະຍາດ **COVID-19** ດ້ວຍເຄື່ອງກວດ **RT-PCR**, ເຂົ້າພັກກັກກັນຕົວຢູ່ສະຖານທີ່ ທີ່ຄະນະສະເພາະກິດກໍານົດໄວ້ ເພື່ອລໍຖ້າຜົນກວດບໍ່ເກີນ **48** ຊົ່ວໂມງ ແລະ ຖ້າຜົນກວດບໍ່ພົບເຊື້ອກໍຕ້ອງໄດ້ສືບຕໍ່ຈໍາກັດບໍລິເວນ ຢູ່ສະຖານທີ່ພັກເຊົາຂອງຕົນ ໃຫ້ຄົບ **07** ວັນ ພ້ອມທັງປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມການຕິດເຊື້ອຢ່າງເຂັ້ມງວດ;

**1.2** ນັກການທູດ ຫຼື ພະນັກງານສະຖານທູດຕ່າງໆ, ພະນັກງານຜູ້ຕາງໜ້າອົງການຈັດຕັ້ງສາກົນ ທີ່ນອນຢູ່ໃນເຄືອຂ່າຍ ຂອງອົງການສະຫະປະຊາຊາດ, ອົງການຈັດຕັ້ງສາກົນທີ່ ໄດ້ຮັບເອກະສິດ ແລະ ອະພິສິດທາງການທູດ ລວມທັງສະມາຊິກຄອບຄົວຂອງເປົ້າໝາຍດັ່ງກ່າວ ທີ່ໄດ້ຮັບອະນຸຍາດ ຈາກຄະນະສະເພາະກິດ ໃຫ້ເຂົ້າມາ ສປປ ລາວ, ເມື່ອມາເຖິງ ສປປ ລາວ ຕ້ອງໄດ້ເກັບຕົວຢ່າງ ເພື່ອກວດຫາເຊື້ອພະຍາດ **COVID-19** ດ້ວຍເຄື່ອງກວດ **RT-PCR** ແລະ ໃຫ້ສືບຕໍ່ຈໍາກັດບໍລິເວນ ຢູ່ສະຖານທີ່ພັກເຊົາຂອງຕົນ ໃຫ້ຄົບ **07** ວັນ, ພ້ອມທັງປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມການຕິດເຊື້ອຢ່າງເຂັ້ມງວດ;

1.3 ກຸ່ມນັກທຸລະກິດ ຫຼື ນັກລົງທຶນ ທີ່ໄດ້ຮັບການອະນຸຍາດ ໃຫ້ດຳເນີນທຸລະກິດ ຫຼື ລົງທຶນ ຢູ່ ສປປ ລາວ ທີ່ຈະເດີນທາງເຂົ້າມາ ສປປ ລາວ, ເມື່ອມາເຖິງ ສປປ ລາວ ຕ້ອງໄດ້ກວດຫາເຊື້ອພະຍາດ **COVID-19** ດ້ວຍເຄື່ອງກວດ **RT-PCR** ແລະ ຈຳກັດບໍລິເວນ ຢູ່ ສະຖານທີ່ ທີ່ຄະນະສະເພາະກິດ ກຳນົດໄວ້ ເພື່ອລໍຖ້າຜົນກວດບໍ່ເກີນ 48 ຊົ່ວໂມງ, ຖ້າຜົນກວດບໍ່ພົບເຊື້ອ ສາມາດອອກໄປປະຕິບັດ ວຽກງານ ຕາມແຜນທີ່ກຳນົດໄວ້, ແຕ່ຕ້ອງໃສ່ອຸປະກອນຕິດຕາມທາງການແພດ ແລະ ຕ້ອງປະຕິບັດ ມາດຕະການປ້ອງກັນ ແລະ ຄວບຄຸມການຕິດເຊື້ອຢ່າງເຂັ້ມງວດ;

1.4 ຄົນຕ່າງປະເທດ ທີ່ເປັນ ຊ່ຽວຊານ, ວິຊາການ, ແຮງງານ, ຜູ້ປະກອບການ, ນັກສຶກສາ, ຄົນເຊື້ອຊາດ ລາວ ແລະ ຄອບຄົວຂອງພົນລະເມືອງລາວ, ເມື່ອມາເຖິງ ສປປ ລາວ ຕ້ອງໄດ້ເກັບຕົວຢ່າງ ເພື່ອກວດ ຫາເຊື້ອພະຍາດ **COVID-19** ດ້ວຍເຄື່ອງກວດ **RT-PCR** ແລະ ລໍຖ້າຜົນກວດບໍ່ເກີນ **48** ຊົ່ວໂມງ ຢູ່ໂຮງແຮມທີ່ຄະນະສະເພາະກິດກຳນົດ, ຖ້າຜົນກວດບໍ່ພົບເຊື້ອ ແມ່ນໃຫ້ສືບຕໍ່ຈຳກັດບໍລິເວນ ຢູ່ ສະຖານທີ່ ພັກເຊົາຂອງຕົນ ໃຫ້ຄົບ **07** ວັນ, ແຕ່ຕ້ອງໃສ່ອຸປະກອນຕິດຕາມທາງການແພດ, ພ້ອມທັງ ປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມການຕິດເຊື້ອຢ່າງເຂັ້ມງວດ;

1.5 ນັກທ່ອງທ່ຽວເປັນກຸ່ມ ທີ່ຈະເດີນທາງເຂົ້າມາລາວ ພາຍໃຕ້ໂຄງການເສັ້ນທາງທ່ອງທ່ຽວສີຂຽວ, ເມື່ອ ມາເຖິງ ສປປ ລາວ ຕ້ອງໄດ້ເກັບຕົວຢ່າງ ເພື່ອກວດຫາເຊື້ອພະຍາດ **COVID-19** ດ້ວຍເຄື່ອງກວດ **RT-PCR**, ເຂົ້າພັກຢູ່ໂຮງແຮມ ທີ່ຄະນະສະເພາະກິດໄດ້ກຳນົດໄວ້ ເພື່ອລໍຖ້າຜົນກວດບໍ່ເກີນ **48** ຊົ່ວໂມງ ແລະ ຖ້າຜົນກວດບໍ່ພົບເຊື້ອ ຈຶ່ງອະນຸຍາດ ໃຫ້ອອກໄປເຄື່ອນໄຫວກິດຈະກຳຕາມແຜນທ່ອງ ທ່ຽວ ແຕ່ຕ້ອງໃສ່ອຸປະກອນຕິດຕາມທາງການແພດ, ພ້ອມທັງປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມການຕິດເຊື້ອຢ່າງເຂັ້ມງວດ.

ບັນດາກຸ່ມເປົ້າໝາຍທີ່ລະບຸໃນຂໍ້ 1.1-1.5 ຂ້າງເທິງ ກໍລະນີຜົນກວດພົບເຊື້ອ (ຜົນເປັນບວກ) ແມ່ນ ສາມາດເຂົ້າປິ່ນປົວຢູ່ໂຮງໝໍ ຫຼື ສູນປິ່ນປົວ ຫຼື ປິ່ນປົວຢູ່ສະຖານທີ່ພັກເຊົາຂອງຕົນ ຢ່າງໜ້ອຍ 10 ວັນ ໂດຍອີງຕາມອາການຂອງຜູ້ຕິດເຊື້ອແຕ່ລະກໍລະນີ ຕາມຄູ່ມືແນະນຳຂອງກະຊວງສາທາລະນະສຸກ ໃນແຕ່ລະ ໄລຍະ.

**2.** ສຳລັບຄົນຕ່າງປະເທດ ທີ່ອາໄສຢູ່ ສປປ ລາວ ລວມທັງຜູ້ທີ່ເດີນທາງເຂົ້າມາ ສປປ ລາວ ຕາມການອະນຸມັດ ຂອງຄະນະສະເພາະກິດຂັ້ນສູນກາງ ຕ້ອງໄດ້ດຳເນີນການຕິດຕັ້ງ ແລະ ລົງທະ ບຽນ ໂປຣແກຣມ (ແອັບ) **LaoKYC** ໃນໂທລະສັບມືຖືຂອງຕົນ ເພື່ອໃຊ້ບໍລິການ "ລາວ ສູ້ສູ້" ແລະ ສະໝັກສ້າງລະຫັດວັກຊີນ (**Vaccine ID**) ເພື່ອໃຊ້ ເປັນບັດຢັ້ງຢືນການສັກວັກຊີນ ແລະ ສະຖານະຄວາມສ່ຽງຂອງຕົນ ໃນເວລາເຄື່ອນໄຫວ, ເດີນທາງ, ເຂົ້າໄປສຳນັກງານ ຂອງລັດ, ໂຮງງານ, ຮ້ານຄ້າ, ຮ້ານອາຫານ ແລະ ສະຖານທີ່ຕ່າງໆ.

3. ເຫັນດີອະນຸຍາດ ໃຫ້ກະຊວງການຕ່າງປະເທດ ອອກວີຊາ ສຳລັບນັກທ່ອງທ່ຽວເປັນກຸ່ມ ທີ່ຈະເດີນທາງເຂົ້າ ມາ ສປປ ລາວ ພາຍໃຕ້ໂຄງການເສັ້ນທາງທ່ອງທ່ຽວສີຂຽວ ທີ່ລັດຖະບານ ໄດ້ອະນຸຍາດແລ້ວນັ້ນ ທີ່ລະບຸໃນຂໍ້ **1.5** ໂດຍຮັບປະກັນໃຫ້ນັກທ່ອງທ່ຽວຕ້ອງລົງທະບຽນ **QR Code (Vaccine ID)** ເພື່ອນຳໃຊ້ໄລຍະທ່ອງທ່ຽວຢູ່ ສປປ ລາວ ແລະ ອອກວີຊາ ໃຫ້ກຸ່ມເປົ້າໝາຍຕ່າງໆ ຕາມທີ່ໄດ້ລະບຸໃນ ຂໍ້ທີ **1.1-1.4** ຂ້າງເທິງ ຕາມການອະນຸຍາດຂອງ ຄະນະສະເພາະກິດ.

4. ເຫັນດີດ້ານຫຼັກການໃຫ້ເປີດດ່ານທ້ອງຖິ່ນ ແລະ ດ່ານປະເພນີສຳລັບຂົນສົ່ງສິນຄ້າ ໂດຍມອບໃຫ້ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ທີ່ມີຊາຍແດນຕິດກັບຕ່າງປະເທດ ດຳເນີນການກວດກາ ທັງປຶກສາຫາລືກັບ ທ້ອງຖິ່ນຂອງປະເທດທີ່ມີດ່ານຮ່ວມກັນ ຖ້າເຫັນວ່າມີຄວາມພ້ອມຮອບດ້ານ ລວມທັງສິ່ງອຳນວຍຄວາມສະດວກໃນ ການຂົນສົ່ງສິນຄ້າ ແລະ ຮັບປະກັນໃນການປ້ອງກັນ ແລະ ຄວບຄຸມການລະບາດ ຂອງພະຍາດ **COVID-19** ທັງມີ

ຄວາມເປັນເອກະພາບກັນສູງແລ້ວ ແມ່ນມອບໃຫ້ອົງການປົກຄອງນະຄອນຫຼວງວຽງຈັນ ແລະ ອົງການປົກຄອງແຂວງ ອະນຸຍາດໃຫ້ເປີດໄດ້.

5. ເຫັນດີໃຫ້ພາກເອກະຊົນມີສ່ວນຮ່ວມ ໃນການເກັບຕົວຢ່າງເພື່ອກວດຫາເຊື້ອພະຍາດ **COVID-19.** ສ່ວນລາຍລະອຽດ, ມອບໃຫ້ກະຊວງສາທາລະນະສຸກ ເປັນໃຈກາງສົມທົບ ກັບ ກະຊວງກ່ຽວຂ້ອງ ຄົ້ນຄ້ວາ ແລະ ກຳນົດມາດຖານເງື່ອນໄຂ ທັງສ້າງລະບຽບການຄຸ້ມຄອງຫົວໜ່ວຍທຸລະກິດທີ່ອະນຸຍາດ ໃຫ້ດຳເນີນການກວດພະຍາດເຊື້ອພະຍາດດັ່ງກ່າວນັ້ນ ຕາມມາດຕະຖານທີ່ກະຊວງສາທາລະນະສຸກກຳນົດໄວ້.

6. ມອບໃຫ້ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດ **COVID-19** ຂັ້ນສູນກາງ ຊຸກຍູ້ການຜະລິດຢາປິ່ນປົວພະຍາດ **COVID-19** ໃຫ້ສາມາດຜະລິດໄດ້ພຽງພໍກັບຄວາມຕ້ອງການຂອງສັງຄົມ.

7. ໃຫ້ອົງການປົກຄອງທ້ອງຖິ່ນທຸກຂັ້ນ ເພີ່ມທະວີປຸກລະດົມ ການສັກວັກຊີນ ດ້ວຍຫຼາຍຮູບການ ແລະ ຫຼາຍວິທີການ ເພື່ອໃຫ້ສາມາດສັກໄດ້ຫຼາຍເທົ່າທີ່ຈະຫຼາຍໄດ້ ຕາມຄຳສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີການສັກວັກຊີນກັນພະຍາດໂຄວິດ-19 ສະບັບເລກທີ **24/ນຍ**, ລົງວັນທີ **10** ພະຈິກ **2021**.

8. ເຫັນດີ ໃຫ້ເປີດກິລາ ໃນຮົ່ມ ແລະ ກາງແຈ້ງ ທຸກປະເພດ, ແຕ່ໃຫ້ເຈົ້າຂອງສະຖານທີ່ ມີມາດຕະການປ້ອງກັນ ແລະ ຄວບຄຸມ ຢ່າງເຂັ້ມງວດ.

9. ສືບຕໍ່ ປິດຮ້ານບັນເທີງ ແລະ ຮ້ານຄາລາໂອເກະ.

**10.** ໃຫ້ອົງການປົກຄອງທ້ອງຖິ່ນທຸກຂັ້ນອະນຸຍາດ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການບໍລິການລົດໂດຍສານ, ຜູ້ໂດຍສານ, ຜູ້ເດີນທາງດ້ວຍພາຫະນະປະເພດເດີນທາງ ໄປ-ມາ ລະຫວ່າງແຂວງ ຕໍ່ ແຂວງ, ເມືອງຕໍ່ເມືອງ ໄດ້ຢ່າງປົກກະຕິ, ແຕ່ພະນັກງານຂັບລົດ ແລະ ຜູ້ໂດຍສານ ຕ້ອງໄດ້ຮັບການສັກວັກຊີນຄົບໂດສ. ພ້ອມດຽວກັນນີ້ ກໍຫ້າມອົງການປົກຄອງທຸກຂັ້ນ ສ້າງຄວາມຫຍຸ້ງຍາກໃຫ້ແກ່ການໄປມາຫາສູ່ກັນ ກໍຄືການທຳມາຫາກິນຂອງພົນລະເມືອງທຸກຄົນ ໃນຂອບເຂດທົ່ວປະເທດດ້ວຍການກຳນົດລະບຽບການທີ່ແຕກຕ່າງ ຈາກລະບຽບການ ທີ່ລັດຖະບານ ກໍຄືຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ **COVID-19** ຂັ້ນສູນກາງ ໄດ້ວາງອອກ ຢ່າງເດັດຂາດ.

**11.** ມອບໃຫ້ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດ **COVID-19** ທຸກຂັ້ນ ຮີບຮ້ອນຜັນຂະຫຍາຍແຈ້ງການສະບັບນີ້ ອອກເປັນຄຳແນະນຳໃນການຈັດຕັ້ງປະຕິບັດຕົວຈິງໃຫ້ລະອຽດ ແລະ ສຳເລັດໄວ.

<u>ໝາຍເຫດ</u>: ແຈ້ງການສະບັບນີ້ ປ່ຽນແທນແຈ້ງການສະບັບເລກທີ 1494/ຫສນຍ, ລົງວັນທີ 14 ພະຈິກ 2021.

ດັ່ງນັ້ນ, ຈຶ່ງຮຽນແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

[illegible] ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ຄຳລາວັນ ຈັນທະລາວັນ

<u>ປ່ອນສົ່ງ:</u>

- ນາຍົກ-ຮອງນາຍົກລັດຖະມົນຕີ, ທ່ານລະ 1 ສະບັບ;
- ບັນດາກະຊວງ-ອົງການ ພາກສ່ວນລະ 1 ສະບັບ;
- ບັນດາແຂວງ-ນະຄອນຫຼວງ ພາກສ່ວນລະ 1 ສະບັບ;
- ຄະນະ ຫສນຍ ທ່ານລະ 1 ສະບັບ;
- ບັນດາກົມພາຍໃນ ຫສນຍ ກົມລະ 1 ສະບັບ;
- ສຳເນົາ 1 ສະບັບ.